# ບົດທີ 11

# ທີ່ສຸດແຜ່ນດິນໂລກ

**1** ຮຽນຄືນກ່ອນ!

ກ. ວັນອັງຄານ ພະເຍຊູກັບຜູ້ນຳສາດສະໜາຢິວເຮັດຫຍັງ? ______________________

ຂ. ຕາມທີ່ມັດທາຍບັນທຶກໄວ້ ພະເຍຊູຍົກຄຳອຸປະມາຈັກປະການໃນວັນນັ້ນ? __________

ຄ. ພວກເຂົາຍົກຄຳຖາມມາຈັກປະການ? ___________________________________

ງ. ໃນທີ່ສຸດພະເຍຊູປະນາມໃຜ? _________________________________________

ຈ. ພະເຍຊູຍົກຕົວຢ່າງທີ່ເຂົາໜ້າຊື່ໃຈຄົດຈັກປະການ? _________________________

ສ. ພະອົງກັບໄປຈະພັກນອນໃນບ້ານໃດ? __________________________________

ຊ. ພະອົງຂ້າມພູໃດ? _______________________________________________

ຍ. ຢູ່ເທິງພູນັ້ນພະອົງເສຍໃຈຢ່າງໜັກເລື່ອງກຸງໃດ? __________________________

ດ. ພະເຍຊູສະແດງອາລົມຈິດໃຈຢ່າງໃດ? __________ ຊາວເຢລູຊາເລັມເດ? _________

ຕ. ທີ່ພະເຍຊູທຳນວາຍເລື່ອງການທຳລາຍກຸງເຢລູຊາເລັມສຳເລັດໃນປີໃດ? __________

ຖ. ດ້ວຍກອງທັບຈັກກະພັດໃດ? ______________________________________

ທ. ໃນ ມທ 24:3 ພະອົງໄປໃສກັບພວກສາວົກ? ____________________________

**2** ຄຳເທດສະໜາອັນຍາວທີ່ສຸດຂອງພະເຍຊູ ຢູ່ໃນມັດທາຍ ບົດ 4-6. ຄຳເທດສະໜາອັນຍາວທີ່ສອງນີ້ ຢູ່ໃນມັດທາຍ 24-25.

ກ.ພະເຍຊູເທດສະໜາເທື່ອທີສອງນີ້ຢູ່ພູໃດ? ______________________________

ຂ.ຄຳເທດສະໜານັ້ນຢູ່ໃນ ມັດທາຍບົດໃດແດ່? _____________________________

**3** ໃນຄຳເທດສະໜາຢູ່ພູໝາກກອກເທດ ພະເຍຊູຕອບຄຳຖາມຂອງພວກສາວົກ 3 ປະການໃດ? (ຕື່ມຄວາມຈາກ ມທ 24:3)

ກ. _______________________________________________ ຈະເກີດຂຶ້ນເວລາໃດ?

ຂ. ສິ່ງໃດເປັນໝາຍສຳຄັນວ່າທ່ານ _______________________________________ ?

ຄ. ສິ່ງໃດເປັນ ມາຍສຳຄັນວ່າ ____________________ ຈະ ____________________ ?

**4** ທີ່ພວກສາວົກຖາມວ່າ "ເຫດການເຫຼົ່ານີ້ຈະເກີດຂຶ້ນເວລາໃດ" ເຂົາອ້າງເຖິງເຫດການໃດແດ່? (ມທ 24:2) __________________________________________________________

**5** ທີ່ພະເຍຊູກັບພວກສາວົກນັ່ງຢູ່ພູໝາກກອກເທດ ເຂົາເບິ່ງກຸງເຢລູຊາເລັມ. ຕຶກສຳຄັນທີ່ສຸດທີ່ເຂົາເຫັນຄືຕຶກໃດ? ___________________________________________________

**6** ພະອົງບໍ່ໄດ້ຕອບຄຳຖາມທຳອິດ ແຕ່ພະອົງໄດ້ຕອບຄຳຖາມອີກສອງປະການ. ພະອົງໄດ້ຕອບຄຳຖາມສອງປະການ ໃດ? ___________________________ ແລະ ______________

**7** ໃນມັດທາຍ ບົດ 24 ແລະ 25 ພະອົງໄດ້ຕອບສອງເລື່ອງໃດ? (ເລືອກ)

ກ. ເລື່ອງການປ່າວປະກາດຂ່າວປະເສີດ ຂ. ເລື່ອງການສອນພະຄຳພີ

ຄ. ເລື່ອງສະໄໝທີ່ໂລກຈະສິ້ນສຸດລົງ ງ. ເລື່ອງຄຳອ້ອນວອນ

ຈ. ເລື່ອງທີ່ພະອົງຈະມາອີກ

**8** ໃນ ມທ ບົດ 25 ພະອົງຍົກຄຳອຸປະມາ 3 ປະການທີ່ກ່ຽວເລື່ອງດຽວກັນກັບຄຳຕອບຂອງພະອົງ ໃນ ມທ ບົດ 24. ຄຳອຸ ປະມາເຫຼົ່ານັ້ນອ້າງເຖິງສອງເລື່ອງໃດ? ____________________

________________________________________________________________

**9** ໃຫ້ທ່ານອ່ານ ມທ 25:1-13 ຄຳອຸປະມານັ້ນກ່າວເລື່ອງຫຍັງ? (ເລືອກ)

ກ. ເລື່ອງເງິນຕາລັນຕົນ

ຂ. ເລື່ອງສາວປອດສິບຄົນ

ຄ. ເລື່ອງຂ້າໃຊ້ສັດຊື່ແລະຂ້າໃຊ້ຊົ່ວ

ງ. ເລື່ອງຝູງແກະແລະຝູງແບ້ (ການພິພາກສາ)



**10** ໃຫ້ອ່ານ ມທ 25:14-30 ຄຳອຸປະມານັ້ນກ່າວເລື່ອງຫຍັງ? (ເລືອກ)

ກ. ເງິນຕາລັນຕົນ ຂ. ຝູງແກະແລະຝູງແບ້

ຄ. ຄົນໃຊ້ສັດຊື່ແລະຄົນໃຊ້ຊົ່ວ ງ. ສາວປອດສິບຄົນ

**11** ໃຫ້ອ່ານ ມທ 25:31-46. ຄຳອຸປະມາສຸດທ້າຍນີ້ກ່າວເລື່ອງຫຍັງ? (ເລືອກ)

ກ. ເງິນຕາລັນຕົນ ຂ. ສາວປອດສິບຄົນ

ຄ. ຂ້າໃຊ້ສັດຊື່ແລະຂ້າໃຊ້ຊົ່ວ ງ. ຝູງແກະແລະຝູງແບ້

**12** ໃຫ້ທ່ານຂຽນຫົວເລື່ອງແຕ່ລະຄຳອຸປະມາ ແລະຂໍ້ພະຄຳພີທີ່ເຫັນໃນ ມທ ບົດ 25.

ກ. ເລື່ອງ ________________________________ ໃນ ມທ 25: _____ ເຖິງ _____

ຂ. ເລື່ອງ ________________________________ ໃນ ມທ 25: _____ ເຖິງ _____

ຄ. ເລື່ອງ ________________________________ ໃນ ມທ 25: _____ ເຖິງ _____

**13** ຄຳອຸປະມາທັງ 3 ປະການນັ້ນ ອ້າງເຖິງເຫດການສອງປະການໃດທີ່ພະເຢຊູທຳນວາຍໄວ້?

______________________________ ແລະ ______________________________

**14** ໃນມັດທາຍ ບົດໃດແດ່ ທີ່ພະເຢຊູເທດສະໜາຢູ່ພູໝາກກອກເທດ? ________________

**15** ໃນຫຼັກສູດກ່ອນນັ້ນເຮົາໄດ້ຮຽນມາທີ່ພະເຢຊູເປັນທັງຜູ້ປະກາດ, ປະໂລຫິດແລະກະສັດ. ມີຢູ່ທັງສາມແງ່ດັ່ງຕໍ່ໄປນີ້:

ກ. ທີ່ພະເຢຊູຕ່າງໜ້າມະນຸດຕໍ່ພະເຈົ້າ? ________________________________

ຂ. ທີ່ພະເຢຊູຕ່າງໜ້າພະເຈົ້າຕໍ່ມະນຸດ? ________________________________

ຄ. ທີ່ພະເຢຊູປົກຄອງປະຊາຊົນເພື່ອພະເຈົ້າ? ______________________________

**16** ພາລະຂອງຜູ້ປະກາດພະທຳມີຢູ່ສອງສ່ວນຄື:

* ເພິ່ນຕີຄວາມໝາຍພະຄຳພີໃຫ້ຝູງຊົນຟັງ.
* ເພິ່ນທຳນວາຍເຫດການທີ່ຈະເກີດຂຶ້ນໃນອະນາຄົດ.

ກ. ໃນຄຳເທດສະໜາຢູ່ພູໝາກກອກເທດ ພະອົງປ່າວປະກາດແບບສ່ວນໃດ?

________________________________________________

ຂ. ພະເຢຊູ ປະກາດເລື່ອງສິ່ງໃນຍຸກໃດ? (ເລືອກ)

ອາດີດ ປະຈຸບັນ ອະນາຄົດ

**17** ກ. ວັນອັງຄານຕອນແລງພະອົງຈາກພະວິຫານໄປພູໃດ? ______________________

ຂ. ໄປກັບໃຜ? ______________________________________

ຄ. ນັ່ງເບິ່ງກຸງໃດ? ____________________________________

ງ. ຕຶກໃດ? ________________________________________

ຈ. ພະອົງເວົ້າກັບສາວົກເລື່ອງເຫດການສອງປະການໃດ? ______________________

**18** ໃຫ້ທ່ານເປີດພະຄຳພີເບິ່ງກໍໄດ້.

ກ. ໃນ ມທ ບົດທີ 24 ພະເຢຊູກ່າວເຖິງໝາຍສຳຄັນກ່ຽວກັບຄວາມທຸກລຳບາກ ຈາກຂໍ້ໃດໄປຫາຂໍ້ໃດ? ______________________________________

ຂ. ພະເຢຊູກ່າວເຖິງຫຍັງຈາກມັດທາຍ 24:3-28? ___________________________

**19** ໃຫ້ທ່ານອ່ານ ມທ 24:3-28 ແລ້ວເອົາຂໍ້ພະຄຳພີຈາກຂ້າງຊ້າຍຈັບເປັນຄູ່ກັບເຫດການທີ່ທຳນວາຍໄວ້ຂ້າງຂວາ.



_____ ມທ 24:5 ກ. ການອຶດຢາກ

_____ ມທ 24:6 ຂ. ພະຄຼິດທຽມ

_____ ມທ 24:7 ຄ. ຄວາມອະທຳແຜ່ກວ້າງອອກ

_____ ມທ 24:9 ງ. ໝໍທຳນວາຍຫຼອກລວງ

_____ ມທ 24:11 ຈ. ຈະກຽດຊັງ ແລະຂ້າຄຼິດສະຕຽນ

_____ ມທ 24:12 ສ. ຂ່າວປະເສີດຈະປະກາດໄປທົ່ວໂລກ

_____ ມທ 24:14 ຊ. ແຜ່ນດິນໄຫວ

_____ ມທ 24:24 ຍ. ຂ່າວລືເຖິງການເສິກສົງຄາມ



ໃຫ້ທ່ານເອົາສໍສີຟ້າຂີດກ້ອງໝາຍສຳຄັນເຫຼົ່ານັ້ນໃນ ມທ ບົດ 24 ຕາມແຕ່ລະຂໍ້ທີ່ປາກົດມາໃນຄຳຖາມ 19 ນັ້ນ. ຍົກຕົວຢ່າງໃຫ້ຂີດກ້ອງຄຳວ່າ "ເຮົານີ້ແຫຼະເປັນພະຄຼິດ" ໃສ່ ມທ 24:5 ຂີດກ້ອງຄຳວ່າ "ຂ່າວເລົ່າລືເຖິງເລື່ອງການເສິກສົງຄາມ" ໃສ່ ມທ 24:6 ໆ ລ ໆ

**20** ໃຫ້ທ່ານອ່ານ ມທ 24:6, 8 ແລະ 14 ອີກ. ໝາຍສຳຄັນເຫຼົ່ານັ້ນຈະປະກົດມາກ່ອນສິ້ນສຸດໂລກ ຫຼືໃນເວລາດຽວກັນ ກັບສິ້ນສຸດໂລກ? ______________________________

**21** ເຫັນວ່າເຫດການສຳຄັນທີ່ຈະເກີດມີຂຶ້ນກ່ອນທີ່ສຸດປາຍ ຈະມາເຖິງມີຢູ່ 3 ດ້ານຄື:

* ເຫດການດ້ານສາດສະໜາ
* ເຫດການດ້ານການເມືອງແລະສັງຄົມ
* ເຫດການທຳມະຊາດ



ກ. ການອຶດຢາກກັບແຜ່ນດິນໄຫວຂຶ້ນຢູ່ກັບດ້ານໃດ? ______________________________

ຂ. ຄວາມອະທຳ ແລະຂ່າວລືເຖິງການເສິກສົງຄາມໃນດ້ານໃດ? ______________________

ຄ. ພະຄຼິດຫຼຸມໜໍທຳນວາຍຫຼອກລວງ ການກຽດຊັງຄຼິດສະຕຽນ ແລະການປະກາດຂ່າວປະເສີດໄປທົ່ວໂລກ ຢູ່ດ້ານໃດ? ______________________________

**22** ໃຫ້ທ່ານເປີດພະຄຳພີໃນ ມທ ບົດ 24 ແລ້ວຕອບດັ່ງຕໍ່ໄປນີ້:

ກ. ຈະມີເຫດການໃດໃນດ້ານສັງຄົມແລະການເມືອງ? ______________________________

______________________________________________________________

ຂ. ຈະມີເຫດການໃດໃນດ້ານທຳມະຊາດ? ______________________________

______________________________________________________________

ຄ. ຈະມີເຫດການໃດໃນດ້ານສາດສະໜາ? ______________________________

______________________________________________________________

______________________________________________________________

______________________________________________________________

**23** ກ. ພະເຢຊູທຳນວາຍຢ່າງໃດກ່ຽວກັບພະວິຫານ? ______________________________

ຂ. ພະວິຫານຢູ່ໃນກຸງໃດ? ______________________________

> ຖ້າເຂົາຈະທຳລາຍພະວິຫານ ເຂົາຕ້ອງຕີກຸງກ່ອນ. ໃຫ້ທ່ານຂຽນຄຳວ່າ
> "ທຳລາຍກຸງເຢລູຊາເລັມແລະພະວິຫານ" ຂ້າງ ມທ 24:15

**24** ຍັງມີເຫດການອີກສອງປະການທີ່ຈະປະກົດມາກ່ອນການທຳລາຍພະວິຫານແລະກຸງເຢລູຊາເລັມ.

ກ. ໃນ ລູກາ 21:20-21 ເຂົາຈະເຫັນຫຍັງກ່ອນ? ______________________________

ເລື່ອງນັ້ນເຂົ້າໃຈໄດ້ງ່າຍບໍ່? ______________________________

ຂ. ໃນມັດທາຍ 24:15 ເຂົາຈະເຫັນສິ່ງໃດກ່ອນ? ______________________________

ເລື່ອງສິ່ງນັ້ນເຂົ້າໃຈໄດ້ງ່າຍບໍ່? ______________________________

**25** “ສິ່ງທີ່ໜ້າກຽດໜ້າຊັງ” ເຄີຍອ້າງເຖິງພະທຽມໃນສະໄໝພະຄຳພີເດີມ. (ເລືອກຄຳທີ່ຖືກຕໍ່ໄປນີ້)

ກ. ໃນສາຍຕາຂອງຄົນຢິວ ຄຳວ່າ “ສິ່ງທີ່ໜ້າກຽດໜ້າຊັງ” ອ້າງເຖິງຄົນຂີ້ດຽດ

ຂ. ເປັນສັນຍາລັກຢ່າງເໝາະສົມໃນການນະມັດສະການພະເຈົ້າ

ຄ. ເປັນຮູບພະທຽມ ທີ່ຄົນຕ່າງປະເທດເຄີຍນັບຖື

**26** ກອງທັບເຫຼົ່ານັ້ນເຄີຍຖືທຸງຊາດແລະທຸງໝວດໄປນຳກັນເວລາຈະເຂົ້າການຮົບ. ທຸງໝວດທີ່ເຂົາເຄີຍຖືມີປະໂຫຍດຢ່າງ ໃດ? (ເລືອກ)

ກ. ຈົກທໍ່ບາດແຜ. ຂ. ໃຊ້ເປັນຜ້າປູຕຽງນອນ. ຄ. ໃຊ້ໝາຍໝວດໄວ້.

**27** ກອງທັບທະຫານໂລມກໍມີອັນຄ້າຍຄືກັບທຸງໝວດນັ້ນຢູ່ ແຕ່ແທນທີ່ຈະເປັນທຸງແທ້ ສັນຍາລັກທີ່ເຂົາຖືໄປພ້ອມນັ້ນຄື ຮູບຈາລຶກຂອງເຈົ້າຈັກກະພັດກາຍຊາ. ບໍ່ແມ່ນແຕ່ເຂົາໃຊ້ເປັນເຄື່ອງໝາຍຢ່າງດຽວ ກ່ອນທີ່ເຂົາຈະເຂົ້າການຮົບເຂົາຄຸ ເຂົ່າລົງນະມັດສະການຮູບນັ້ນ.ໃນສາຍຕາຂອງຊາດຢິວການເຄົາລົບຮູບຈາລຶກນັ້ນເປັນຢ່າງໃດ? (ເລືອກ)

ກ. ຄົນຢິວຖືວ່າບໍ່ເປັນຫຍັງ.

ຂ. ເປັນການຂາບໄຫວ້ພະທຽມຢ່າງໜ້າກຽດໜ້າຊັງ.

ຄ. ເຂົາຍິນຍອມດ້ວຍເພາະສະແດງຄວາມຮັກຕໍ່ເຈົ້າຈັກກະພັດ.

**28** ການກະທຳນັ້ນຊາດຢິວຈະຖືວ່າເປັນຢ່າງໃດ? (ເລືອກ)

ກ. ໜ້າກຽດໜ້າຊັງ. ຂ. ໜ້າຈັບໃຈ. ຄ. ໜ້າຢາກຫົວ.

**29** ໃຫ້ເຮົາຮຽນຄືນກ່ຽວກັບໝາຍສຳຄັນກ່ອນສິ້ນສຸດໂລກ. ຈະມີເຫດການໃດ? (ຕື່ມຄວາມ)

ກ. ເຫດການດ້ານສັງຄົມແລະການ ________________________________________

________________________________________

________________________________________

ຂ. ເຫດການດ້ານທຳ ________________________________________ ແວດລ້ອມ.

________________________________________

________________________________________

ຄ. ເຫດການດ້ານສາດ________________________________________ .

________________________________________

________________________________________

________________________________________

________________________________________

**30** ຄຳວ່າ “ສິ່ງທີ່ໜ້າກຽດໜ້າຊັງ” ຈາກພະຄຳພີເດີມອ້າງເຖິງຫຍັງ? ____________________

**31** ທຳມະດາ ທະຫານໂລມບໍ່ໄດ້ນອນໃນກຸງເຢລູຊາເລັມເພາະເຂົາບໍ່ຢາກກະທຳຜິດຕໍ່ສາດສະໜາຢິວດ້ວຍບໍ່ມີເຫດ. ໃນ ເມື່ອເວລາເຫດສະການປັດສະຄາເຂົາຈຳເປັນຕ້ອງມານອນຮັກສາຄວາມປອດໄພແຕ່ໃນເວລານັ້ນເຂົາບໍ່ໄດ້ເອົາຮູບຈາ ລຶກຂອງກາຍຊາມານຳ.

ກ. ທະຫານໂລມສະແດງທີ່ເຂົານັບຖືຊາວຢິວໃນດ້ານໃດ? ____________________________

______________________________________________________________

ຂ. ເປັນຫຍັງຮູບຈາລຶກກາຍຊາບໍ່ຖືກກັບໃຈຊາວຢິວ? ____________________________

______________________________________________________________

ຄ. ຊາວຢິວເຄີຍເອີ້ນພະຫຸ່ນເຫຼົ່ານັ້ນວ່າຢ່າງໃດ? ____________________________

**32** ເມື່ອປີລາດເລີ້ມຕົ້ນປົກຄອງໃນແຂວງຢູດາເພິ່ນເອົາກອງທັບທະຫານມາເຂົ້າກຸງພ້ອມດ້ວຍຮູບຈາລຶກເຫຼົ່ານັ້ນ. ເມື່ອ ຊາວຢິວຮູ້ເລື່ອງແລ້ວເຂົາໄປບອກປີລາດວ່າ "ຈົ່ງຂ້າພວກເຮົາກໍໄດ້ ແຕ່ຈຳເປັນຕ້ອງເອົາສິ່ງທີ່ໜ້າກຽດໜ້າຊັງອອກ ຈາກເມືອງບໍລິສຸດນີ້"

ກ. ປີລາດເຮັດຫຍັງຈຶ່ງໃຫ້ຄົນຢິວໃຈຮ້າຍປານນັ້ນ? ____________________________

______________________________________________________________

ຂ. ເປັນຫຍັງຊາດຢິວຕົກໃຈປານນັ້ນ? ____________________________

ຄ. ຄົນຢິວເອີ້ນສິ່ງນັ້ນວ່າຢ່າງໃດ? ____________________________

**33** ກ. ໃນ ມທ 24:15 ເຂົາຈະຕັ້ງສິ່ງທີ່ໜ້າກຽດໜ້າຊັງໄວ້ບ່ອນໃດ? ____________________

ຂ. ໃນບ່ອນໃດ? ______________________________________________

**34** ກ. ມັດທາຍບັນທຶກເລື່ອງໝາຍສຳຄັນໃດໃນພະວິຫານ? ________________________

ຂ. ລູກາ 21:20 ບັນທຶກເລື່ອງໝາຍສຳຄັນໃດທີ່ຈະມາຕັ້ງອ້ອມຮອບກຸງເຢລູຊາເລັມ?______

**35** ຊາວຢິວໂກດເຄືອງ ການປົກຄອງຂອງຈັກກະພັດໂລມຈົນກວ່າໃນປີ ຄ.ສ.66 ເກີດມີການກະບົດຢ່າງເປີດເຜີຍ. ໃນປີ ຄ.ສ.70 ກອງທັບໂລມປິດລ້ອມກຸງເຢລູຊາເລັມ. ອີກບໍ່ເຫິງເຢລູຊາເລັມກໍຖືກທຳລາຍ.

ກ. ເປັນຫຍັງກອງທັບໂລມຈຶ່ງໂຈມຕີເຢລູຊາເລັມ? ____________________________

ຂ. ກ່ອນທີ່ຈະໂຈມຕີ ເຂົາເຮັດຫຍັງ? ____________________________

ຄ. ເຂົາປິດລ້ອມເຫິງປານໃດ? ____________________________

ງ. ເຢລູຊາເລັມຖືກທຳລາຍໃນປີໃດ? ____________________________

ຈ. ໃນປະຈຸບັນນີ້ຍັງມີສ່ວນໃດທີ່ເຫຼືອຢູ່ຈາກພະວິຫານ? ________________________

ສ. ມີຕຶກໃດໃນສະຖານທີ່ນັ້ນ,ດຽວນີ້? ____________________________

**36** ເມື່ອປະຊາຊົນໃນກຸງເຢລູຊາເລັມມີການກະບົດ ຊາວຢິວຈາກບ່ອນອື່ນກໍເຂົ້າມາຮ່ວມ. ດັ່ງນັ້ນ ເມື່ອກອງທັບໂລມ ປິດລ້ອມແລ້ວ ມີຫຼາຍຄົນທີ່ຂັງໄວ້ໃນ, ຫຼາຍຄອບຄົວຕາຍຍ້ອນການອຶດເຂົ້າ ຍິ່ງກວ່ານັ້ນອີກຕ່າງຄົນກໍຕ່າງຂັດແຍ່ງ ກັນແລ້ວຂ້າກັນຕາຍຈົນກວ່າໃນທີ່ສຸດມີຄົນຕາຍ 1.100.000 ຄົນ ແລະອີກ 97.000 ຄົນທີ່ຖືກຈັບເປັນຊະເລີຍ.

ກ. ເມື່ອຄົນໃນກຸງເຢລູຊາເລັມມີການກະບົດ ຊາວຢິວຫຼາຍຄົນໄປໃສ? ______________

ຂ. ແລ້ວເກີດມີບັນຫາໃດ? ______________________________________________

ຄ. ແບ່ງເປັນພັກເປັນພວກແລ້ວເປັນຫຍັງ? ________________________________

ງ. ມີຈັກຄົນຕາຍ? ___________________________________________________

ຈ. ຈັກຄົນຖືກຈັບເປັນຊະເລີຍ? _________________________________________

ສ. ຕົກໃນປີໃດ? ____________________________________________________

**37** ນັກປະຫວັດສາດ ໂຢສີຟັດບອກວ່າ ໃນເວລາກອງທັບໂລມຈະເລີ້ມຕົ້ນປິດລ້ອມນາຍພົນກອງທັບໂລມເປີດໂອກາດໃຫ້ ຄົນທີ່ຢາກໜີ ອອກໜີໄດ້. ມີຄຼິດສະຕຽນຊາດຢິວຫຼາຍຄົນທີ່ອອກໃນເວລານັ້ນ. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານຂີດ √ ໃສ່ຄໍາ ໃດທີ່ຖືກ.

ກ. ______ ທີ່ກອງທັບໂລມປິດລ້ອມກຸງເຢລູຊາເລັມຄົນຕາຍບໍ່ຫຼາຍ

ຂ. ______ ຝູງຊົນອຶດຢາກທັງເກີດມີສົງຄາມກາງເມືອງຈຶ່ງບໍ່ມີທາງລອດ

ຄ. ______ ຄຼິດສະຕຽນຕັ້ງໃຈຈະຢູ່ໃນກຸງຈົນກວ່າຈະຕາຍ

ງ. ______ ເຫັນກອງທັບອ້ອມຮອບກຸງແລ້ວ ພວກຄຼິດສະຕຽນຈື່ຄວາມຂອງພະເຢຊູ ໃນລູກາ 21:20-21 ແລ້ວເຂົາສວຍໂອກາດອອກໄປ

ຈ. ______ ເຢລູຊາເລັມຕົກໃນປີ ຄ.ສ. 66

ສ. ______ ຊາວຢິວມີອາຫານພຽງພໍ ຈຶ່ງສາມາດເອົາຊະນະກອງທັບໂລມໄດ້

ຊ. ______ ພະວິຫານຖືກທໍາລາຍໃນປີ ຄ.ສ. 70

*ເທື່ອໃດທີ່ເຮົາເຫັນສາຍພູເຂົາມາແຕ່ໄກ ເຮົາອາດຈະເຫັນຫຼາຍໜ່ວຍພ້ອມໆ ກັນ ແຕ່ຜູ້ເບິ່ງອາດຈະບໍ່ຮູ້ໜ່ວຍໃດໄກໜ່ວຍໃດໃກ້. ເຊັ່ນດຽວກັນກັບຄໍາທໍານວາຍ ຜູ້ປະກາດເອງອາດຈະບໍ່ຮູ້ອັນໃດໄກອັນໃດໃກ້ແລະອີກຄໍາທໍານວາຍ ນັ້ນອາດຈະມີສ່ວນສໍາເລັດສອງເທື່ອ ຄືເທື່ອໜຶ່ງໃນໄວໆ ແລະອີກເທື່ອໜຶ່ງໃນອະນາຄົດທີ່ໄກ. ເລື່ອງຄໍາທໍານວາຍກ່ຽວກັບການສະເດັດມາຂອງພະເຢຊູ ມີບາງປະການທີ່ສໍາເລັດແລ້ວ ແລະອີກບາງປະການທີ່ຈະສໍາເລັດໃນເວລາພະເຢຊູມາເທື່ອທີສອງ.*



**38** ໃນຄຳທຳນວາຍ ມີຢູ່ບາງເທື່ອທີ່ຄຳທຳນວາຍນັ້ນຈະສຳເລັດໃນເວລາໃກ້ໆແຕ່ຍັງມີທີ່ຈະ ________________ ຢ່າງສົມບູນຈິນ ກວ່າໃນ _________________ . (ຕື່ມຄວາມຂາດ)

**39** ຍົກຕົວຢ່າງ ໃນເອຊາຢາ 7:14 ມີຄຳທຳນວາຍທີ່ເອຊາຢາກ່າວໃຫ້ກະສັດອາກາເຊທີ່ເປັນໝາຍສຳຄັນໃນຄຳສັນ ຍາຈາກພະເຈົ້າວ່າ ຈັກກະພັດຊີເລຍຈະຊະນະກຸງເຢລູຊາເລັມບໍ່ໄດ້. ໝາຍສຳຄັນນັ້ນຄື ຍິງສາວຜູ້ໜຶ່ງຈະຖືພາແລ້ວຈະ ເກີດມີລູກຫຍັງ? ____________________

**40** ຄຳທຳນວາຍນັ້ນ ສຳເລັດສອງເທື່ອຄື ເທື່ອທຳອິດໃນ ເອຊາຢາ 8:3-4.

ກ. ແມ່ຂອງເດັກຊາຍຄົນທຳອິດນັ້ນຄືໃຜ? ________________________________

ຂ. ພໍ່ເດ? _____________________________________________________

**41** ແລ້ວຄຳທຳນວາຍນັ້ນສຳເລັດຢ່າງສົມບູນອີກ (ໃຫ້ເບິ່ງ ມັດທາຍ 1:23) ເປັນເທື່ອທີສອງ.

ກ. ແມ່ຄືໃຜ? ______________________________

ຂ. ບິດາເດ? _______________________________

ຄ. ບຸດນັ້ນຊື່ຫຍັງ? ___________________________



**42** ກ. ຄຳທຳນວາຍອາດຈະສຳເລັດຈັກເທື່ອ? ____________

ຂ. ສຳເລັດເທື່ອທຳອິດເມື່ອໃດ? __________________

ຄ. ຕໍ່ມາມີຄວາມສຳເລັດຢ່າງໃດ? _________________

**43** ກ. ເຊັ່ນດຽວກັນ ຄຳທຳນວາຍຂອງພະເຢຊູໃນມັດທາຍ 24 ມີຄວາມສຳເລັດໃນບໍ່ຊ້ານັ້ນດ້ວຍການທຳລາຍກຸງໃດ? ____________________________________________

ຂ. ໃນປີໃດ? ________________________________________________

ຄ. ແລະໃນສະໄໝປະຈຸບັນນີ້ ກຳລັງຈະສຳເລັດຢ່າງໃດ? ______________________

**44** ໃຫ້ທ່ານຈົດໂຄງຮ່າງເລື່ອງໝາຍສຳຄັນທີ່ເຫັນໃນມັດທາຍ 24

ກ. ເຫດການດ້ານ ______________________ ແລະ _______________________ .

__________________________________________________________

__________________________________________________________

ຂ. ເຫດການດ້ານ _______________________________________________

__________________________________________________________

__________________________________________________________

ຄ. ເຫດການດ້ານ _______________________________________________

__________________________________________________________

__________________________________________________________

__________________________________________________________

__________________________________________________________

**45** ໃຫ້ທ່ານກັບໄປອ່ານ ມທ 24:3-28 ອີກ.

ກ. ຄຳທຳນວາຍນັ້ນສຳເລັດເທື່ອທຳອິດໃນເຫດການໃດ? ______________________

ຂ. ສຳເລັດຢ່າງສົມບູນໃນເວລາໃດ? ____________________________________

______________________________________________________________

*ໃຫ້ເປີດຕອບຄຳຖາມໃນບົດເສັງ!*

**ຄຳຕອບ:**

**1** *ກ. ໂຕ້ຖຽງກັນ ຂ. 3 ປະການ ຄ. 4 ປະການ ງ. ນັກທຳ ແລະຟາລິຊາຍ*
*ຈ. 7 ປະການ ສ. ເບດທາເນຍ ຊ. ໝາກກອກເທດ ຍ. ເຢລູຊາເລັມ*
*ດ. ຄວາມຮັກ; ຄວາມຊັງ ຕ. ຄ.ສ. 70 ຖ. ໂລມ ທ. ພູ ໝາກກອກເທດ*

**2** *ກ. ໝາກກອກເທດ ຂ. ບົດ 24 - 25*

**3** *ກ. ເຫດການເຫຼົ່ານີ້ ຂ. ...ຈະມາ ຄ. ...ສະໄໝເກົ່າຈະສິ້ນສຸດລົງ.*

**4** *ກ້ອນຫີນທີ່ຊ້ອນທັບກັນຢູ່ທີ່ນີ້ຈະຖືກທຳລາຍລົງຈົນບໍ່ເຫຼືອຈັກກ້ອນດຽວ*
*(ຄືພະວິຫານຈະຖືກທຳລາຍ)*

**5** *ພະວິຫານ*

**6** *ສິ່ງໃດເປັນໝາຍສຳຄັນວ່າທ່ານຈະມາ ແລະສະໄໝເກົ່າສິ້ນສຸດລົງ*

**7** *ຄ ແລະ ຈ ຖືກ*

**8** *ເລື່ອງທີ່ພະອົງຈະມາອີກ ເລື່ອງສະໄໝສິ້ນສຸດ*

**9** *ຂ ຖືກ*

**10** *ກ ຖືກ*

**11** *ງ ຖືກ*

**12** *ກ. ສາວປອດສິບຄົນ 1 ເຖິງ 13*
*ຂ. ເງິນຕາລັນຕົນ 14 ເຖິງ 30*
*ຄ. ຝູງແກະແລະຝູງແບ້ 31 ເຖິງ 46*

**13** *ທີ່ພະອົງຈະມາອີກ ແລະ ສະໄໝສິ້ນສຸດ (ຄວາມທຸກລຳບາກ)*

**14** *24 ແລະ 25*

**15** *ກ. ປະໂລຫິດ ຂ. ຜູ້ປະກາດພະທຳ ຄ. ກະສັດ*

**16** *ກ. ທຳນວາຍເຫດການທີ່ຈະມາ ຂ. ອະນາຄົດ*

**17** *ກ. ໝາກກອກເທດ ຂ. ພວກສາວົກ ຄ. ເຢລູຊາເລັມ ງ. ພະວິຫານ*
*ຈ. ທີ່ພະອົງຈະກັບມາ; ສະໄໝສິ້ນສຸດ*

**18** *ກ. 3-28 ຂ. ຄວາມທຸກລຳບາກ*

**19** *ຂ ມທ 24:5 ຍ ມທ 24:6 ກ, ຊ ມທ 24:7 ຈ ມທ 24:9*
*ງ ມທ 24:11 ຄ ມທ 24:12 ສ ມທ 24:14 ຂ, ງ ມທ 24:24*

**ຄຳຕອບ (ຕໍ່):**

**20** *ກ່ອນ*

**21** *ກ. ທຳມະຊາດ ຂ. ການເມືອງ ຄ. ສາດສະໜາ*

**22** *ກ. ຂ່າວລືເຖິງການເສິກສົງຄາມ ຄວາມອະທຳແຜ່ກວ້າງອອກ*

*ຂ. ແຜ່ນດິນໄຫວ ການອຶດຢາກ*

*ຄ. ພະຄຣິດທຽມໝໍທຳນວາຍຫຼອກລວງ ຈະຊັງແລະຂ້າຄຣິດສະຕຽນ ຂ່າວປະເສີດຈະປະກາດໄປທົ່ວໂລກ*

**23** *ກ. ຈະຖືກທຳລາຍ ຂ. ກຸງເຢລູຊາເລັມ*

**24** *ກ. ກອງທັບມາຕັ້ງອ້ອມຮອບກຸງເຢລູຊາເລັມ ເຂົາໃຈງ່າຍ*

*ຂ. ສິ່ງທີ່ໜ້າກຽດໜ້າຊັງ ບໍ່ງ່າຍ*

**25** *ຄ ຖືກ*

**26** *ຄ ຖືກ*

**27** *ຂ ຖືກ*

**28** *ກ ຖືກ*

**29** *ກ. ... ເມືອງ*

*ຂ່າວລືເຖິງການເສິກສົງຄາມ*

*ຄວາມອະທຳແຜ່ກວ້າງອອກ*

*ຂ. ... ທຳມະຊາດ...*

*ແຜ່ນດິນໄຫວ*

*ການອຶດຢາກ*

*ຄ. ... ສາດສະໜາ*

*ພະຄຣິດທຽມ*

*ໝໍທຳນວາຍຫຼອກລວງ*

*ຈະຊັງແລະຂ້າຄຣິດສະຕຽນ*

*ຂ່າວປະເສີດຈະປະກາດໄປທົ່ວໂລກ*

**30** *ພະທຽມ*

**31** *ກ. ເຂົາບໍ່ໄດ້ເອົາຮູບຈາລຶກທີ່ເຂົາຖືໄວ້ເຂົາກຸງເຢລູຊາເລັມນຳ*

*ຂ. ເພາະເປັນພະທຽມທີ່ເຂົານະມັດສະການ*

*ຄ. ສິ່ງທີ່ໜ້າກຽດໜ້າຊັງ*

**32** *ກ. ເອົາທະຫານໂລມພ້ອມກັບຮູບຈາລຶກກາຍຊາມາເຂົາກຸງ*

*ຂ. ເພາະເປັນພະທຽມ*

*ຄ. ສິ່ງທີ່ໜ້າກຽດໜ້າຊັງ*

**33** *ກ. ໃນສະຖານທີ່ສັກສິດ ຂ. ໃນພະວິຫານ*

**ຄຳຕອບ (ຕໍ່):**

**34** *ກ. ສິ່ງທີ່ໜ້າກຽດໜ້າຊັງໃນທີ່ສັກສິດ ຂ. ກອງທັບ*

**35** *ກ. ເພາະຊາດຢິວກະບົດຕໍ່ຈັກກະພັດໂລມ ຂ. ປິດລ້ອມ ຄ. ບໍ່ເຫີງ ງ. ຄ.ສ.70*
*ຈ. ຮາກຖານຂ້າງດຽວ ສ. ສຸເຫຼົ່າສັກສິດ*

**36** *ກ. ໄປກຸງເຢລູຊາເລັມ ຂ. ຄົນຫຼາຍເກີນໄປຈົນອຶດເຂົາ ຄ. ເຂົາຂ້າກັນ*
*ງ. 1.100.000 ຄົນ ຈ. 97.000 ຄົນ ສ. ຄ.ສ.70*

**37** *ຂ ງ ຊ ຖືກ*

**38** *ສຳເລັດ... ອະນາຄົດ.*

**39** *ຊາຍ.*

**40** *ກ. ພະລິຍາຂອງເອຊາຢາ. ຂ. ເອຊາຢາ.*

**41** *ກ. ມາລີອາ. ຂ. ພະວິນຍານບໍລິສຸດ. ຄ. ພະເຢຊູ.*

**42** *ກ. 2 ເທື່ອ. ຂ. ໃນໄວໆ (ໃນບໍ່ຊ້າ) ຄ. ຢ່າງສົມບູນ.*

**43** *ກ. ເຢລູຊາເລັມ. ຂ. ຄ.ສ.70 ຄ. ຢ່າງສົມບູນ.*

**44** *(ໃຫ້ເບິ່ງຄຳຕອບ 29)*

**45** *ກ. ການທຳລາຍກຸງເຢລູຊາເລັມ.*
*ຂ. ສິ່ງທີ່ກຳລັງເກີດຂຶ້ນມາໃນເວລາດຽວນີ້ກ່ອນສິ້ນສຸດແຜ່ນດິນໂລກ.*